ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊຍະບູລີ

ອົງການພັດທະນາ ແລະ ບໍລິຫານຕົວເມືອງ

ເລກທີ 354/ອພບຕ.ຊຍ

ໄຊຍະບູລີ, ວັນທີ 2 ກໍລະກົດ 2026

# ໜັງສືເຊີນເຂົ້າຮ່ວມການປະມູນ

1. ອົງການພັດທະນາ ແລະ ບໍລິຫານຕົວເມືອງໄດ້ນໍາໃຊ້ຮ່ວງເງິນ ກອງທຶນພັດທະນາຊຸມຊົນ ໂຄງການໄຟຟ້າພະລັງງານຄວາມຮ້ອນຫົງສາ(SEDF) ປະຈໍາປີ 2027, ເພື່ອເຊີນບັນດາ ບໍລິສັດທີ່ສົນໃຈ ເຂົ້າຮ່ວມການປະມູນ ໂຄງການ ສ້າງຖັງຂີ້ເຫຍື້ອໃຫມ່.

2. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ເອກະສານຄໍາແນະນໍາກ່ຽວ ກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

3. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດ, ໃບທະບຽນວິສະຫະກິດທາງດ້ານການກໍ່ສ້າງ-ສ້ອມແປງເຄຫາສະຖານ ແລະ ໃບມອບພັນທະອາກອນປີ 2025 ຫລື 2026 ທີ່ຖືກຕ້ອງຕາມກົດໝາຍ.

4. ບໍລິສັດໃດທີ່ສົນໃຈຂໍເຊີນຕິດຕໍ່ຂໍ້ມູນໄດ້ທີ່ ຂະແໜງບໍລິຫານ-ຈັດຕັ້ງແຜນການ ແລະ ການເງິນ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕາມໂມງລັດຖະການ ເລີ່ມແຕ່ວັນທີ 3/7/2026 ເຖິງວັນທີ 3/8/2026ໃນລາຄາ **500,000** ກີບ/ຊອງ, ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ).

5. ຊອງປະມູນໂຄງການສ້າງຖັງຂີ້ເຫຍື້ອໃຫມ່, ຈະຕ້ອງໄດ້ສົ່ງບໍ່ໃຫ້ກາຍເວລາ 08:00 ໂມງ ຂອງວັນທີ 3/8/2026 ທີ່ຂະແໜງບໍລິຫານ, ແຜນການ ແລະ ການເງິນອົງການພັດທະນາ ແລະ ບໍລິຫານຕົວເມືອງ, ຊອງປະມູນສົ່ງຊ້າກ່ວາເວລາທີ່ໄດ້ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍ ບໍ່ມີການເປີດຊອງ ແລະ ຈະດໍາເນີນເປີດຊອງໃນເວລາ 08:30 ໂມງ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກໍາມະການ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ.

6. ສອບຖາມຂໍ້ມູນເພີ່ມເຕີມກະລຸນາຕິດຕໍ່ພົວພັນ: ທ່ານ ໄຊຍະສິດ ສີມສີ, ໂທ: 020 55190029, ຮອງຫົວໜ້າຂະແໜງ ຈັດຕັ້ງ - ປະຕິບັດໂຄງການ ອົງການພັດທະນາ ແລະ ບໍລິຫານຕົວເມືອງ ຕາມທີ່ຢູ່ຂ້າງລຸ່ມນີ້:

ຊື່ສໍານັກງານ: ອົງການພັດທະນາ ແລະ ບໍລິຫານຕົວເມືອງ.

ທີ່ຕັ້ງ: ບ້ານ ທ່ານາ, ເມືອງໄຊຍະບູລີ, ແຂວງໄຊຍະບູລີ.

ເລກໂທລະສັບ: 074 211 441

ຫົວໜ້າອົງການ

ແຂວງໄຊຍະບູລີ
ອົງການພັດທະນາ
ບໍລິຫານຕົວເມືອງ
ເມືອງໄຊຍະບູລີ

ບົວແພງ ອິນທະວົງ

Scanned with TapScanner